ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 06 /ນຍ
ນະຄອນຫຼວງວຽງຈັນ, ວັນທີ 07 / 03 / 25

# ຄໍາສັ່ງ
## ວ່າດ້ວຍການຕິດຕາມ, ກວດກາ ແລະ ການແກ້ໄຂ ບັນຫາ ແຮ່ຄໍາຕົກຂ້ອນ, ຫີນ ແລະ ຊາຍ ຕາມບັນດາສາຍນໍ້າ, ຮ່ອງຫ້ວຍ ແລະ ການຄຸ້ມຄອງການຂຸດຄົ້ນແຮ່ທາດຕ່າງໆ ໃນຂອບເຂດທົ່ວປະເທດ.

- ອີງຕາມ ກົດໝາຍ ວ່າດ້ວຍແຮ່ທາດ ສະບັບເລກທີ 31/ສພຊ, ລົງວັນທີ 3 ພະຈິກ 2017;
- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງ ວິໄສທັດ ຮອດປີ 2040 ແລະ ຍຸດທະສາດການພັດທະນາແຮ່ທາດ ຮອດປີ 2030 ສະບັບເລກທີ 95/ສພຊ, ລົງວັນທີ 18 ກໍລະກົດ 2023;
- ອີງຕາມ ຜົນກອງປະຊຸມ ລັດຖະບານເປີດກວ້າງ ຄັ້ງທີ II ຄັ້ງວັນທີ 6-7 ມັງກອນ 2025;
- ອີງຕາມ ແຈ້ງການ ຂອງຫ້ອງວ່າການສູນກາງພັກ ສະບັບເລກທີ 12/ຫສພ, ລົງວັນທີ 04 ກຸມພາ 2025.

ເພື່ອເພີ່ມທະວີໃນການຈັດຕັ້ງປະຕິບັດ ວຽກງານການຄຸ້ມຄອງ, ກວດກາ ແລະ ແກ້ໄຂບັນຫາການພັດທະນາແຮ່ທາດຕ່າງໆ, ລວມທັງ ແຮ່ຄໍາຕົກຂ້ອນ, ການດູດຫີນແຮ່ ແລະ ຊາຍ ໃນຂອບເຂດທົ່ວປະເທດ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການຕ່າງໆ ທີ່ກໍານົດອອກໃນແຕ່ລະໄລຍະ.

## ນາຍົກລັດຖະມົນຕີ ອອກຄໍາສັ່ງ:

1. ໃຫ້ຢຸດຕິຖາວອນ ການອອກອະນຸຍາດ ໃຫ້ຂຸດຄົ້ນແຮ່ຄໍາຕົກຂ້ອນ ທຸກຮູບແບບໃນຂອບເຂດທົ່ວປະເທດ, ໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນ ຈັດຕັ້ງປະຕິບັດ ດັ່ງນີ້:
   1) ຫ້າມບໍ່ໃຫ້ກະຊວງກ່ຽວຂ້ອງ ແລະ ຂັ້ນອົງການປົກຄອງທ້ອງຖິ່ນ ໃນຂອບເຂດທົ່ວປະເທດ ສ້າງເງື່ອນໄຂທີ່ເປັນຊ່ອງວ່າງ ໃນທຸກຮູບແບບ ໃຫ້ແກ່ການຂຸດຄົ້ນແຮ່ຄໍາຕົກຂ້ອນ, ຢູ່ໃນເຂດອ່າງນໍ້າທີ່ເປັນໂຄງການພັດທະນາທີ່ນໍ້າຈະຖ້ວມ, ສ້າງໂຄງການພິເສດ, ລວມທັງການດູດຫີນແຮ່ ແລະ ຊາຍ ທີ່ນໍາໃຊ້ຕະແກງ, ກົນຈັກ, ໂຕະຮ່ອນ, ເຄື່ອງມື ແລະ ອຸປະກອນຕ່າງໆ ຕາມແຄມສາຍນໍ້າ, ຮ່ອງຫ້ວຍ ແລະ ຕາມທົ່ງນາຕ່າງໆ ເພື່ອສະກັດເອົາແຮ່ຄໍາຕົກຂ້ອນ ຢ່າງເດັດຂາດ;
   2) ໃຫ້ກວດກາ ແລະ ປະຕິບັດມາດຕະການຕໍ່ການລັກລອບຂຸດຄົ້ນແຮ່ຄໍາຕົກຂ້ອນ, ການດູດຫີນແຮ່ ແລະ ຊາຍ ໃນທຸກກໍລະນີ (ທີ່ເປັນການສວຍໂອກາດສະກັດເອົາແຮ່ຄໍາຕົກຂ້ອນ) ໃນຂອບເຂດທົ່ວປະເທດ;
   3) ສໍາລັບໂຄງການແຮ່ຄໍາຕົກຂ້ອນ ທີ່ໄດ້ຮັບອະນຸມັດຈາກລັດຖະບານ ແລະ ຂັ້ນອົງການປົກຄອງທ້ອງຖິ່ນ ໃນໄລຍະຜ່ານມາ ທີ່ກໍາລັງຂຸດຄົ້ນໃນປັດຈຸບັນ ໃຫ້ເຊີນບໍລິສັດກ່ຽວຂ້ອງ ມາເຈລະຈາໄລ່ລຽງກັນ ເພື່ອໃຫ້ຢຸດເຊົາໂຄງການ, ແຕ່ກ່ອນຈະມອບເນື້ອທີ່ດັ່ງກ່າວ ໃຫ້ລັດຖະບານ ບໍລິສັດຕ້ອງປັບປຸງປົວແປງສະພາບພື້ນທີ່ ແລະ ສິ່ງແວດລ້ອມ ໃນເຂດດັ່ງກ່າວ ໃຫ້ກັບຄືນສູ່ສະພາບປົກກະຕິ ໂດຍມີການຕິດຕາມຢ່າງໃກ້ຊິດຂອງຂະແໜງການກ່ຽວຂ້ອງພາກລັດ ເພື່ອບໍ່ໃຫ້ມີການສວຍໂອກາດໃນທຸກຮູບແບບຕື່ມອີກເດັດຂາດ;
   4) ສໍາລັບໂຄງການແຮ່ຄໍາຕົກຂ້ອນ ຂອງບັນດາບໍລິສັດ ທີ່ໄດ້ຖອກເງິນຄ່າສິດສໍາປະທານ ແລະ ຄ່າຊັບພະຍາກອນທໍາມະຊາດ ໃຫ້ລັດຖະບານ ລ່ວງໜ້າແລ້ວ, ແຕ່ບໍ່ທັນໄດ້ເຊັນສັນຍາສໍາປະທານເທື່ອ ແມ່ນບໍ່ອະນຸ

ຍາດໃຫ້ເຊັນສັນຍາສຳປະທານຕື່ມອີກ, ມອບໃຫ້ກະຊວງການເງິນ ສົມທົບກັບ ກະຊວງແຜນການ ແລະ ການລົງທຶນ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ພາກສ່ວນທີ່ກ່ຽວຂ້ອງ ພ້ອມກັນກວດກາຄືນພັນທະຕ່າງໆທີ່ໄດ້ລະບຸໃນສັນຍາ ລວມທັງຈຳນວນເງິນທີ່ຈະສົ່ງຄືນແກ່ບັນດາບໍລິສັດ (ຖ້າມີ) ຫຼື ເປັນຮູບການໄລ່ລຽງ ເພື່ອຫັກລົບກັບພັນທະຂອງບັນດາບໍລິສັດ ທີ່ຕ້ອງມອບໃຫ້ລັດໃນໂຄງການອື່ນໆ;

2. ໃຫ້ເລັ່ງການຫັນໂຄງການທົດລອງ ໄປສູ່ກົນໄກປົກກະຕິ ໃຫ້ສອດຄ່ອງກັບກົດໝາຍກຳນົດ ຕາມທີ່ລະບຸໃນແຈ້ງການ ສະບັບເລກທີ 978/ຫສນຍ, ລົງວັນທີ 22 ພຶດສະພາ 2024 ຢ່າງເຂັ້ມງວດ ໂດຍສະເພາະ ກ່ອນບໍລິສັດຈະດຳເນີນການສືບຕໍ່ຂຸດຄົ້ນ ແລະ ປຸງແຕ່ງ ແມ່ນຕ້ອງໄດ້ສຳເລັດວຽກງານການສຳຫຼວດແຮ່ທາດ, ການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ແລະ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຢ່າງລະອຽດຄົບຖ້ວນສາກ່ອນ ຈຶ່ງໃຫ້ອອກໃບອະນຸຍາດຂຸດຄົ້ນໃຫ້ບໍລິສັດ. ພ້ອມກັນນັ້ນ, ກໍໃຫ້ຢຸດຕິການພິຈາລະນາຕໍ່ກໍລະນີ ຍ້າຍ ຫຼື ປ່ຽນແທນ ເນື້ອທີ່ບ່ອນອື່ນໆມາແທນໂຄງການສຳປະທານແຮ່ທົດລອງຢ່າງເດັດຂາດ;

3. ສືບຕໍ່ໂຈະການພິຈາລະນາອະນຸມັດໂຄງການແຮ່ທາດໃໝ່ ສຳລັບແຮ່ໂລຫະທາດ ຈົນໝົດສະໄໝລັດຖະບານຊຸດທີ IX ຍົກເວັ້ນບາງທ້ອງຖິ່ນທີ່ທຸກຍາກ ແລະ ການຕົກລົງຂອງຂັ້ນເທິງ ແມ່ນຈະມີນິຕິກຳ ກຳນົດສະເພາະຕື່ມ. ໃນໄລຍະໂຈະການອອກອະນຸມັດໂຄງການໃໝ່ ສຳລັບແຮ່ໂລຫະທາດ, ມອບໃຫ້ບັນດາຂະແໜງການ ແລະ ຂັ້ນອົງການປົກຄອງທ້ອງຖິ່ນ ເອົາໃຈໃສ່ຕື່ມ ດັ່ງນີ້:
   1) ເພີ່ມຄວາມເຂັ້ມງວດ ໃນການຄຸ້ມຄອງ, ຕິດຕາມກວດກາ ບັນຫາຜົນກະທົບຕໍ່ສິ່ງແວດລ້ອມ ໂດຍໃຫ້ປະຕິບັດຕາມແຜນຄຸ້ມຄອງ ແລະ ຕິດຕາມກວດສິ່ງແວດລ້ອມ ທີ່ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຮັບຮອງຢ່າງເຂັ້ມງວດ;
   2) ເພີ່ມຄວາມເຂັ້ມງວດໃນການຄຸ້ມຄອງ, ຕິດຕາມກວດກາ ການຂົນສົ່ງແຮ່ທາດ ໂດຍສະເພາະການຄຸ້ມຄອງນ້ຳໜັກໃນລົດບັນທຸກປະເພດຕ່າງໆ ແລະ ການປະກອບສ່ວນພັນທະດ້ານງົບປະມານ ເພື່ອບູລະນະຮັກສາ, ສ້ອມແປງ ແລະ ຍົກລະດັບທາງແຕ່ລະປະເພດ ໂດຍໃຫ້ປະຕິບັດຕາມຂໍ້ກຳນົດ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ວາງອອກຢ່າງເຂັ້ມງວດ;
   3) ບັນດາໂຄງການຮ່ວມມື ຊອກຄົ້ນ-ສຳຫຼວດ ລະຫວ່າງ ບໍລິສັດ ກັບ ກົມທໍລະນີສາດ ແລະ ແຮ່ທາດ ແລະ ບໍລິສັດ ກັບ ຂະແໜງການອື່ນ: ❶ ໃຫ້ຢຸດຕິບໍ່ໃຫ້ມີໂຄງການຮ່ວມມືໃໝ່ຕື່ມອີກ, ❷ ສຳລັບໂຄງການເກົ່າຜ່ານມາ ເມື່ອສິ້ນສຸດອາຍຸ MOU ແມ່ນບໍ່ໃຫ້ສືບຕໍ່ອີກ, ສ່ວນຂໍ້ມູນທີ່ໄດ້ຈາກການສຶກສາ ແມ່ນບໍ່ໃຫ້ເປັນບູລິມະສິດ ເພື່ອສະເໜີຂໍເຊັນສັນຍາກັບລັດຖະບານ ແລະ ໃຫ້ມອບຂໍ້ມູນດັ່ງກ່າວນັ້ນ ເປັນບູລິມະສິດຂອງລັດຖະບານ ໃນການພິຈາລະນາ ຕົກລົງອະນຸຍາດລົງທຶນ ດ້ວຍຮູບແບບການປະມູນ ຫຼື ຮູບແບບອື່ນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

4. ມາດຕະການຈັດຕັ້ງປະຕິບັດຄຳສັ່ງ.
   1) ໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ເປັນໃຈກາງສົມທົບກັບພາກສ່ວນກ່ຽວຂ້ອງ ຄົ້ນຄວ້າປັບປຸງ, ມາດຕະການໃນການຄຸ້ມຄອງຜະລິດຕະພັນແຮ່ຄຳ ຂອງແຕ່ລະໂຄງການ ຕາມຂັ້ນຕອນຂອງກົດໝາຍ ນັບແຕ່ຂັ້ນຕອນການຜະລິດ, ການເຄື່ອນຍ້າຍ ແລະ ການຈຳໜ່າຍຜະລິດຕະພັນແຮ່ທາດ; ຄົ້ນຄວ້າປຶກສາຫາລືກັບຜູ້ລົງທຶນເພື່ອໃຫ້ລັດຖະບານ ເຂົ້າຮ່ວມຖືຮຸ້ນ; ສຳລັບແຮ່ທາດອື່ນ ກວດກາຄືນ ເຂດໂຄງການແຮ່ທາດ ແຕ່ລະປະເພດທີ່ມີຄວາມສ່ຽງໃນການລັກລອບຂຸດຄົ້ນໃຫ້ລະອຽດ, ພ້ອມທັງຮີບຮ້ອນດຳເນີນການສຳຫຼວດ ແລະ ວາງແຜນຄຸ້ມຄອງໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມກົດໝາຍ ແລະ ລະບຽບການ ໂດຍມີສ່ວນຮ່ວມ ຂອງຂະແໜງການກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ;
   2) ໃຫ້ກະຊວງແຜນການ ແລະ ການລົງທຶນ ເປັນໃຈກາງສົມທົບກັບ ກະຊວງພະລັງງານ ແລະ ບໍ່ແຮ່, ຂະແໜງການກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນໃນຂອບເຂດທົ່ວປະເທດ ສືບຕໍ່ລົງຕິດຕາມບັນດາໂຄງການບໍ່ແຮ່ທາດຕ່າງໆໃນຂອບເຂດທົ່ວປະເທດ. ໃນກໍລະນີ ກວດພົບເຫັນໂຄງການໃດ ທີ່ດຳເນີນການຂຸດຄົ້ນບໍ່ຖືກຕ້ອງ, ລະເມີດສັນຍາສຳປະທານ, ສ້າງຜົນກະທົບຕໍ່ສິ່ງແວດລ້ອມ-ສັງຄົມ ແມ່ນແຈ້ງໂຈະກິດຈະການຊົ່ວຄາວ, ຫຼັງຈາກນັ້ນ ໃຫ້ກະຊວງແຜນການ ແລະ ການລົງທຶນ ອອກແຈ້ງເຕືອນບໍລິສັດ ເພື່ອ

ໃຫ້ປັບປຸງ ແລະ ແກ້ໄຂ ໂດຍໃຫ້ບໍລິສັດ ສະເໜີແຜນການປັບປຸງທີ່ຊັດເຈນ, ຖ້າບໍລິສັດດັ່ງກ່າວ ບໍ່ສາມາດ ປັບປຸງແກ້ໄຂຕາມວັນເວລາທີ່ກໍານົດ ແມ່ນໃຫ້ສະເໜີລັດຖະບານ ເພື່ອຍົກເລີກສັນຍາ ແລະ ຖອນໂຄງການ ຄືນ;

3) ໃຫ້ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ເປັນເຈົ້າການສົມທົບກັບ ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ຂະແໜງການທີ່ກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ ກວດກາຄືນ ດ້ານຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ທີ່ຕິດພັນກັບການຂຸດຄົ້ນ, ຂົນສົ່ງຊັບພະຍາກອນແຮ່ທາດ, ຫາກບໍ່ປະຕິບັດຕາມບັນດາມາດຕະການ ທີ່ກໍານົດໃນແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ແລະ ເຮັດໃຫ້ມີຜົນກະທົບກັບດ້ານສິ່ງແວດລ້ອມທາງທໍາມະຊາດ ແລະ ສັງຄົມ ແມ່ນໃຫ້ດໍາເນີນການຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ;

4) ໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ແລະ ກະຊວງປ້ອງກັນປະເທດ ສືບຕໍ່ປະສານສົມທົບກັນຢ່າງໃກ້ຊິດ ໃນການກວດກາ ແລະ ແກ້ໄຂບັນຫາການຂຸດຄົ້ນແຮ່ຄໍາຕົກຂ້ອນ ແລະ ຂຸດຄົ້ນຫີນແຮ່-ຊາຍ ເພື່ອອັດຊ່ອງວ່າງການສວຍໂອກາດທຸກຮູບແບບ ເພື່ອຂຸດຄົ້ນແຮ່ຄໍາຕົກຂ້ອນ ອັນຈະສົ່ງຜົນກະທົບຕໍ່ສິ່ງແວດລ້ອມທາງທໍາມະຊາດ ລວມທັງສົມທົບກັບ ກະຊວງພະລັງງານ ແລະ ບໍ່ແຮ່ ແລະ ກະຊວງການເງິນ ໃນການຕິດຕາມກວດກາການບັນທຸກນໍ້າໜັກແຮ່ທາດ ຢູ່ຕົ້ນທາງ;

5) ໃຫ້ກະຊວງການເງິນ ເອົາໃຈໃສ່ເຂັ້ມງວດ ໃນການປະຕິບັດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກັບດ້ານການເງິນ ເປັນຕົ້ນ: ການລັກລອບ, ບຸກລຸກ, ການຊື້-ຂາຍ, ເຄື່ອນຍ້າຍຊັບສິນຂອງລັດ ໂດຍບໍ່ຖືກຕ້ອງຕາມກົດໝາຍ, ການບໍ່ປະຕິບັດພັນທະຕ່າງໆ ຕາມສັນຍາ ແລະ ລົງເລີກການກວດກາບັນຊີປະຈໍາປີ ຂອງບັນດາໂຄງການບໍ່ແຮ່ ໂດຍສະເພາະບັນຫາການຈັດເກັບອາກອນກໍາໄລ ແລະ ພາສີ-ອາກອນອື່ນໆ ທີ່ຕິດພັນ. ພ້ອມທັງໃຫ້ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອປະເມີນຄືນຜົນໄດ້ ແລະ ຜົນເສຍໃນການສ້າງລາຍຮັບຈາກການຂຸດຄົ້ນແຮ່ທາດ ທຽບໃສ່ການເກັບລາຍຮັບພາຍໃນທັງໝົດ ພ້ອມນີ້, ໃຫ້ຄົ້ນຄວ້າສ້າງນະໂຍບາຍ ແລະ ນິຕິກໍາ ດ້ານພາສີ-ອາກອນຕ່າງໆ, ພ້ອມທັງຕິດຕາມນໍ້າໜັກແຮ່ທາດ ຢູ່ປາຍທາງ (ດ່ານພາສີ) ແລະ ສະໜອງຂໍ້ມູນໃຫ້ຂະແໜງການກ່ຽວຂ້ອງເພື່ອຮັບຊາບ ຢ່າງເປັນປົກກະຕິ;

6) ພາກສ່ວນກ່ຽວຂ້ອງແຕ່ລະຂັ້ນ ຕ້ອງສ້າງເງື່ອນໄຂໃຫ້ທຸກພາກສ່ວນໃນສັງຄົມມີສ່ວນຮ່ວມໃນການຕິດຕາມກວດກາ, ແຈ້ງສະພາບການລັກລອບຂຸດຄົ້ນແຮ່ທາດ, ສະພາບຜົນກະທົບຕໍ່ສິ່ງແວດລ້ອມທາງທໍາມະຊາດ ແລະ ສັງຄົມ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ຮັບຊາບປົກກະຕິ. ກໍລະນີພົບເຫັນ ມີການລະເມີດກົດໝາຍ ແລະ ນິຕິກໍາກ່ຽວຂ້ອງ ແມ່ນແຈ້ງຂໍ້ມູນແກ່ເຈົ້າໜ້າທີ່ລັດທີ່ກ່ຽວຂ້ອງດ້ວຍທຸກຮູບການ ລວມທັງຜ່ານສື່ ແລະ ຊ່ອງທາງຕ່າງໆ, ເມື່ອໄດ້ຮັບຂໍ້ມູນແລ້ວ ເຈົ້າໜ້າທີ່ລັດ ທີ່ກ່ຽວຂ້ອງ ຕ້ອງຮີບຮ້ອນລົງກວດກາຕົວຈິງ ແລະ ແກ້ໄຂຢ່າງທັນການ, ຫາກພົບເຫັນການລະເມີດແທ້ ແມ່ນຕ້ອງມີມາດຕະການແກ້ໄຂຢ່າງເຂັ້ມງວດ ແລະ ເດັດຂາດ. ພ້ອມກັນນັ້ນ, ກໍໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ສົມທົບກັບ ກະຊວງການເງິນ ແລະ ພາກສ່ວນກ່ຽວຂ້ອງ ຄົ້ນຄວ້າຮູບການຍ້ອງຍໍ ແລະ ແບ່ງຜົນປະໂຫຍດຈາກການປັບໃໝ ໃຫ້ແກ່ຜູ້ແຈ້ງຂໍ້ມູນ ຕາມຄວາມເໝາະສົມ;

7) ມອບໃຫ້ອົງການປົກຄອງນະຄອນຫຼວງວຽງຈັນ, ບັນດາແຂວງ ແລະ ທຸກພາກສ່ວນ ເປັນເຈົ້າການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກໍາທີ່ກ່ຽວຂ້ອງກ່ຽວກັບແຮ່ທາດຢ່າງເຂັ້ມງວດ, ກໍລະນີກວດພົບເຫັນຢູ່ທ້ອງຖິ່ນໃດມີການລັກລອບຂຸດຄົ້ນແຮ່ຄໍາຕົກຂ້ອນ, ມອບໃຫ້ຂັ້ນອົງການປົກຄອງທ້ອງຖິ່ນນັ້ນ ເປັນຜູ້ຮັບຜິດຊອບຕາມກົດໝາຍ ແລະ ລະບຽບການຕ່າງໆ. ພ້ອມນັ້ນ, ໃຫ້ຮີບຮ້ອນດໍາເນີນການກວດກາ, ເກັບກໍາຂໍ້ມູນ ແລະ ແກ້ໄຂການລັກລອບຂຸດຄົ້ນຊັບພະຍາກອນແຮ່ທາດຕ່າງໆ, ການຈັບຈອງ, ການຊື້-ຂາຍ, ການດໍາເນີນກິດຈະການ ຫຼື ດໍາເນີນທຸລະກິດຂອງບຸກຄົນ, ນິຕິບຸກຄົນ, ກໍລະນີ ທີ່ບໍ່ໄດ້ຮັບອະນຸຍາດ ຫຼື ໄດ້ຮັບອະນຸຍາດ ທີ່ບໍ່ຖືກຕ້ອງຕາມກົດໝາຍ ແມ່ນໃຫ້ຢຸດຕິ, ຍຸບເລີກ ແລະ ຮື້ຖອນ, ພ້ອມທັງປະຕິບັດມາດຕະການຕໍ່ຜູ້ລະເມີດ ຕາມກົດໝາຍ ຢ່າງເຂັ້ມງວດ; ສືບຕໍ່ເປັນເຈົ້າການ ແລະ ເຂັ້ມງວດ ໃນການປ້ອງກັນ, ສະກັດກັ້ນການລັກລອບຂຸດຄົ້ນແຮ່ທາດໃນທຸກຮູບແບບ, ໃນກໍລະນີ ຫາກເກີດມີປະກົດການຫຍໍ້ທໍ້ດ້ານແຮ່ທາດຕ່າງໆຢູ່ທ້ອງຖິ່ນໃດ ແມ່ນມອບໃຫ້ທ້ອງຖິ່ນນັ້ນ ເປັນເຈົ້າການໃນການແກ້ໄຂບັນຫາໂດຍໄວ, ເຂັ້ມງວດ ແລະ ຂາດຕົວ ດ້ວຍມາດຕະການຕ່າງໆຕາມຄວາມເໝາະສົມ (ບໍລິຫານ, ເສດຖະກິດ ແລະ ກົດໝາຍ) ຕໍ່

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ລະເມີດ ທັງການກະທຳຜິດດັ່ງກ່າວ ຢ່າງເຂັ້ມງວດ. ພ້ອມນີ້, ໃຫ້ຮີບຮ້ອນສະຫຼຸບ ແລະ ສັງລວມ ລາຍງານຄວາມຄືບໜ້າຜົນການຈັດຕັ້ງປະຕິບັດ ໃຫ້ລັດຖະບານ ຮັບຊາບ ແລະ ມີທິດຊີ້ນຳ ຢ່າງເປັນປົກກະຕິ ໂດຍຜ່ານຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ໃນແຕ່ລະໄລຍະ;

8) ໃຫ້ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສັງລວມຜົນກະທົບຈາກການຂຸດຄົ້ນແຮ່ທາດຕ່າງໆ ຕໍ່ສະຖານທີ່ທ່ອງທ່ຽວ ທີ່ອາດຈະສົ່ງຜົນກະທົບຕໍ່ຊັບພະຍາກອນການທ່ອງທ່ຽວ ທາງທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ ແລະ ເປັນເຈົ້າການສົມທົບຢ່າງໃກ້ຊິດ ກັບກະຊວງພະລັງງານ ແລະ ບໍ່ແຮ່ ເພື່ອກວດກາ ແລະ ມີມາດຕະການປ້ອງກັນຮ່ວມກັນ;

9) ໃຫ້ບັນດາທ່ານລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ, ເຈົ້າຄອງນະຄອນຫຼວງວຽງຈັນ, ບັນດາເຈົ້າແຂວງ ໃນທົ່ວປະເທດ ຄົ້ນຄວ້າ ກຳແໜ້ນຄຳສັ່ງສະບັບນີ້, ພ້ອມທັງຜັນຂະຫຍາຍອອກເປັນໜ້າວຽກລະອຽດ ຕາມຄວາມຮັບຜິດຊອບຂອງຕົນໂດຍໄວ ແລະ ຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ. ກໍລະນີ ຂະແໜງການໃດ, ທ້ອງຖິ່ນໃດ ຫາກລະເມີດຕໍ່ຄຳສັ່ງສະບັບນີ້ ແມ່ນຄະນະນຳຂອງຂະແໜງການນັ້ນ ຫຼື ທ້ອງຖິ່ນນັ້ນ ຕ້ອງຮັບຜິດຊອບຕໍ່ກົດໝາຍ ແລະ ລະບຽບການຕ່າງໆທີ່ກຳນົດໄວ້;

5. ບັນດາຄຳສັ່ງ, ຂໍ້ຕົກລົງ, ແຈ້ງການ ແລະ ນິຕິກຳຕ່າງໆ ຂະແໜງການ ແລະ ຂັ້ນອົງການປົກຄອງທ້ອງຖິ່ນຕ່າງໆ ໄດ້ປະກາດໃຊ້ຜ່ານມາ, ຊຶ່ງມີເນື້ອໃນຂັດກັບຄຳສັ່ງສະບັບນີ້ ລ້ວນແຕ່ຖືກລົບລ້າງ, ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

**ສອນໄຊ ສີພັນດອນ**